ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ເລກທີ 870/ທຫລ
ນະຄອນຫຼວງວຽງຈັນ, ວັນທີ 14 ພະຈິກ 2022

# ຂໍ້ຕົກລົງ
# ວ່າດ້ວຍອັດຕາສ່ວນທາງການເງິນ ເພື່ອຮັກສາຄວາມໝັ້ນຄົງ ຂອງສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ ແລະ ສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ

- ອີງຕາມ ກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ (ສະບັບປັບປຸງ) ສະບັບເລກທີ 47/ສພຊ, ລົງວັນທີ 19 ມິຖຸນາ 2018;
- ອີງຕາມ ດຳລັດວ່າດ້ວຍສະຖາບັນການເງິນຈຸລະພາກ ສະບັບເລກທີ 184/ລບ, ລົງວັນທີ 20 ມິຖຸນາ 2022;
- ອີງຕາມ ການຄົ້ນຄວ້າ ແລະ ການສະເໜີ ຂອງກົມຄຸ້ມຄອງສະຖາບັນການເງິນ.

**ຜູ້ວ່າການທະນາຄານແຫ່ງ ສປປ ລາວ ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ ແລະ ລະບຽບກ່ຽວກັບການປະຕິບັດອັດຕາສ່ວນທາງການເງິນ ເພື່ອຮັກສາຄວາມໝັ້ນຄົງ ຂອງສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ ແລະ ສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ ເພື່ອເປັນເຄື່ອງມືໃນການຕິດຕາມ ແລະ ກວດກາການດຳເນີນງານ ແລະ ການເຄື່ອນໄຫວ ຂອງສະຖາບັນການເງິນດັ່ງກ່າວ ແນໃສ່ເຮັດໃຫ້ການດຳເນີນທຸລະກິດມີຄວາມເຂັ້ມແຂງທາງການເງິນ ແລະ ຍືນຍົງ.

**ມາດຕາ 2 ອັດຕາສ່ວນທາງການເງິນ ເພື່ອຮັກສາຄວາມໝັ້ນຄົງ**

ອັດຕາສ່ວນທາງການເງິນ ເພື່ອຮັກສາຄວາມໝັ້ນຄົງ ແມ່ນອັດຕາສ່ວນທີ່ໄດ້ຈາກການວິເຄາະ ຫຼື ປຽບທຽບຂໍ້ມູນຕົວເລກທາງການເງິນ ທີ່ເປັນຕົວຊີ້ບອກເຖິງລະດັບຄວາມໝັ້ນຄົງ ແລະ ຄວາມສ່ຽງ ຂອງຜົນການດຳເນີນງານທີ່ເກີດຂຶ້ນ ແລະ ອາດຈະເກີດຂຶ້ນໃນອະນາຄົດ ຊຶ່ງຈະປະເມີນໄດ້ເຖິງລະດັບທ່າອ່ຽງອ່ອນແອ,

ອ່ອນແອ ແລະ ອ່ອນແອຫຼາຍ ຂອງສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ ແລະ ສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ສິນເຊື່ອ** ໝາຍເຖິງ ພັນທະທາງການເງິນ ທີ່ໄດ້ກຳນົດໄວ້ໃນສັນຍາ ລະຫວ່າງ ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ ຫຼື ສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ ແລະ ລູກຄ້າ ຊຶ່ງທັງສອງຝ່າຍຕ້ອງໄດ້ພ້ອມກັນຈັດຕັ້ງປະຕິບັດຕາມສັນຍາຢ່າງເຂັ້ມງວດ;

2. **ພາກສ່ວນທີ່ມີສາຍພົວພັນ** ໝາຍເຖິງ ລູກ (ລູກຄີງ, ລູກລ້ຽງ, ລູກນ້າ), ຜົວ ຫຼື ເມຍ, ຍາດສາຍຕັ້ງ ຫຼື ຍາດສາຍຂວາງ ຂອງຜູ້ບໍລິຫານ;

3. **ອັດຕາສ່ວນຄວາມພຽງພໍຂອງການຫັກເງິນແຮສິນເຊື່ອທີ່ຖືກຈັດຊັ້ນ** ໝາຍເຖິງ ອັດຕາສ່ວນຮ້ອຍ ທີ່ໄດ້ກຳນົດໄວ້ໃນແຕ່ລະຊັ້ນສິນເຊື່ອທີ່ຖືກຈັດຊັ້ນ ຂອງຂໍ້ຕົກລົງວ່າດ້ວຍການຈັດຊັ້ນ ແລະ ຫັກເງິນແຮສິນເຊື່ອທີ່ຖືກຈັດຊັ້ນ ຂອງສະຖາບັນການເງິນທີ່ບໍ່ແມ່ນທະນາຄານ.

**ມາດຕາ 4 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ ແລະ ສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ ທີ່ໄດ້ຮັບອະນຸຍາດດຳເນີນທຸລະກິດຈາກທະນາຄານແຫ່ງ ສປປ ລາວ.

## ໝວດທີ 2
## ການກຳນົດອັດຕາສ່ວນທາງການເງິນ ເພື່ອຮັກສາຄວາມໝັ້ນຄົງ

**ມາດຕາ 5 ປະເພດອັດຕາສ່ວນທາງການເງິນ ເພື່ອຮັກສາຄວາມໝັ້ນຄົງ**

ອັດຕາສ່ວນທາງການເງິນ ເພື່ອຮັກສາຄວາມໝັ້ນຄົງ ຂອງສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ ແລະ ສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ ປະກອບດ້ວຍ ອັດຕາສ່ວນຄວາມພຽງພໍຂອງທຶນ, ອັດຕາສ່ວນຄຸນນະພາບຂອງຊັບສິນ ແລະ ອັດຕາສ່ວນສະພາບຄ່ອງ.

**ມາດຕາ 6 ອັດຕາສ່ວນຄວາມພຽງພໍຂອງທຶນ**

ອັດຕາສ່ວນຄວາມພຽງພໍຂອງທຶນ ແມ່ນອັດຕາສ່ວນທີ່ຊີ້ບອກຄຸນນະພາບທຶນ ຂອງສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ ແລະ ສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ ໃນການດຳເນີນທຸລະກິດ ຊຶ່ງຕ້ອງປະຕິບັດຕາມອັດຕາສ່ວນຄວາມພຽງພໍຂອງທຶນ ດັ່ງນີ້:

ສຳລັບສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ ຕ້ອງປະຕິບັດຕາມອັດຕາສ່ວນ ຄື:

1. ອັດຕາສ່ວນທຶນທັງໝົດ ຢ່າງໜ້ອຍ ສິບສອງສ່ວນຮ້ອຍ (12%) ຂອງຊັບສິນທີ່ວາງນ້ຳໜັກຄວາມສ່ຽງ;

2. ອັດຕາສ່ວນທຶນຊັ້ນໜຶ່ງ ຢ່າງໜ້ອຍ ແປດສ່ວນຮ້ອຍ (8%) ຂອງຊັບສິນທີ່ວາງນ້ຳໜັກຄວາມສ່ຽງ.

ສຳລັບສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ ຕ້ອງປະຕິບັດຕາມອັດຕາສ່ວນ ຄື:

1. ອັດຕາສ່ວນທຶນທັງໝົດ ຢ່າງໜ້ອຍ ແປດສ່ວນຮ້ອຍ (8%) ຂອງຊັບສິນທີ່ວາງນ້ຳໜັກຄວາມສ່ຽງ;

2. ອັດຕາສ່ວນທຶນຊັ້ນໜຶ່ງ ຢ່າງໜ້ອຍ ຫ້າສ່ວນຮ້ອຍ (5%) ຂອງຊັບສິນທີ່ວາງນ້ຳໜັກຄວາມສ່ຽງ.

**ມາດຕາ 7 ອັດຕາສ່ວນຄຸນນະພາບຂອງຊັບສິນ**

ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ ແລະ ສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ ຕ້ອງປະຕິບັດອັດຕາສ່ວນຄຸນນະພາບຂອງຊັບສິນ ດັ່ງນີ້:

1. ອັດຕາສ່ວນໜີ້ທວງຍາກ ບໍ່ເກີນ ຫ້າສ່ວນຮ້ອຍ (5%) ຂອງຍອດເຫຼືອສິນເຊື່ອທັງໝົດ;
2. ອັດຕາສ່ວນສິນເຊື່ອໃຫ້ແກ່ລູກຄ້າລາຍໃຫຍ່ ບໍ່ເກີນ ສາມສິບສ່ວນຮ້ອຍ (30%) ຂອງທຶນທັງໝົດ;
3. ອັດຕາສ່ວນສິນເຊື່ອໃຫ້ແກ່ລູກຄ້າໜຶ່ງລາຍ ບໍ່ເກີນ ສິບສ່ວນຮ້ອຍ (10%) ຂອງທຶນທັງໝົດ;
4. ອັດຕາສ່ວນສິນເຊື່ອໃຫ້ແກ່ພາກສ່ວນທີ່ມີສາຍພົວພັນທັງໝົດ ບໍ່ເກີນ ຫ້າສ່ວນຮ້ອຍ (5%) ຂອງທຶນທັງໝົດ;
5. ອັດຕາສ່ວນສິນເຊື່ອໃຫ້ແກ່ພາກສ່ວນທີ່ມີສາຍພົວພັນໜຶ່ງລາຍ ບໍ່ເກີນ ໜຶ່ງສ່ວນຮ້ອຍ (1%) ຂອງທຶນທັງໝົດ;
6. ອັດຕາສ່ວນຄວາມພຽງພໍຂອງການຫັກເງິນແຮສິນເຊື່ອທີ່ຖືກຈັດຊັ້ນ ຢ່າງໜ້ອຍ ໜຶ່ງຮ້ອຍສ່ວນຮ້ອຍ (100%) ຂອງເງິນແຮທັງໝົດທີ່ຕ້ອງສ້າງຕາມລະບຽບ.

**ມາດຕາ 8 ອັດຕາສ່ວນສະພາບຄ່ອງ**

ອັດຕາສ່ວນສະພາບຄ່ອງ ແມ່ນອັດຕາສ່ວນທີ່ຊີ້ບອກຄວາມສາມາດໃນການຊໍາລະໜີ້ສິນ ຫຼື ພັນທະຜູກພັນ ຂອງສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ ແລະ ສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ ຊຶ່ງຕ້ອງປະຕິບັດຕາມອັດຕາສ່ວນ ດັ່ງນີ້:

ສໍາລັບສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ ຕ້ອງປະຕິບັດຕາມອັດຕາສ່ວນ ຄື:

1. ອັດຕາສ່ວນສະພາບຄ່ອງ 1 ຢ່າງໜ້ອຍ ໜຶ່ງສ່ວນຮ້ອຍ (1%) ຂອງເງິນຝາກຂອງລູກຄ້າທັງໝົດ;
2. ອັດຕາສ່ວນສະພາບຄ່ອງ 2 ຢ່າງໜ້ອຍ ສິບຫ້າສ່ວນຮ້ອຍ (15%) ຂອງໜີ້ສິນທັງໝົດ.

ສໍາລັບສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ ຕ້ອງປະຕິບັດຕາມອັດຕາສ່ວນສະພາບຄ່ອງ 2 ຢ່າງໜ້ອຍ ສິບຫ້າສ່ວນຮ້ອຍ (15%) ຂອງໜີ້ສິນທັງໝົດ.

**ມາດຕາ 9 ການລະດົມທຶນ**

ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ ແລະ ສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ ສາມາດລະດົມທຶນທັງພາຍໃນ ແລະ ຕ່າງປະເທດໄດ້ ໃນອັດຕາສ່ວນ ບໍ່ເກີນ ສິບ (10) ເທົ່າຂອງທຶນຊັ້ນໜຶ່ງ ບົນພື້ນຖານກົນໄກການຕະຫຼາດ ແລະ ໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ.

**ມາດຕາ 10 ວິທີການຄິດໄລ່ອັດຕາສ່ວນທາງການເງິນ ເພື່ອຮັກສາຄວາມໝັ້ນຄົງ**

ການຄິດໄລ່ອັດຕາສ່ວນທາງການເງິນ ເພື່ອຮັກສາຄວາມໝັ້ນຄົງ ຂອງສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ ແລະ ສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ ມີດັ່ງນີ້:

1. $\text{ອັດຕາສ່ວນທຶນທັງໝົດ} = \dfrac{\text{ທຶນທັງໝົດ}}{\text{ຊັບສິນທີ່ວາງນໍ້າໜັກຄວາມສ່ຽງ}}$

- ທຶນທັງໝົດ ປະກອບມີ ທຶນຊັ້ນໜຶ່ງ ແລະ ເງິນແຮຕາມລະບຽບການ;
- ຊັບສິນທີ່ວາງນໍ້າໜັກຄວາມສ່ຽງ ມີດັ່ງນີ້:

+ ກຸ່ມຂອງນ້ຳໜັກຄວາມສ່ຽງເທົ່າ ສູນສ່ວນຮ້ອຍ (0%) ປະກອບມີ ເງິນສົດ ແລະ ທີ່ຖືວ່າຄືເງິນສົດ;

+ ກຸ່ມຂອງຊັບສິນທີ່ມີຄວາມສ່ຽງເທົ່າ ຊາວສ່ວນຮ້ອຍ (20%) ປະກອບມີ ເງິນຝາກມີກຳນົດຢູ່ສະຖາບັນການເງິນ ແລະ ພັນທະບັດລັດຖະບານ;

+ ກຸ່ມຂອງຊັບສິນທີ່ມີຄວາມສ່ຽງເທົ່າ ໜຶ່ງຮ້ອຍສ່ວນຮ້ອຍ (100%) ປະກອບມີ ການລົງທຶນໃນຫຼັກຊັບສຸດທິ, ສິນເຊື່ອ ແລະ ເງິນລ່ວງໜ້າໃຫ້ລູກຄ້າສຸດທິ, ເງິນລົງທຶນໃນວິສາຫະກິດໃນກຸ່ມ, ບໍລິສັດຮ່ວມທຶນ ແລະ ກິດຈະການຄຸ້ມຄອງຫຼັກຊັບ, ຊັບສິນຄົງທີ່ສຸດທິ ແລະ ຊັບສິນອື່ນ.

$$2.\ \text{ອັດຕາສ່ວນທຶນຊັ້ນໜຶ່ງ} = \frac{\text{ທຶນຊັ້ນໜຶ່ງ}}{\text{ຊັບສິນທີ່ວາງນ້ຳໜັກຄວາມສ່ຽງ}}$$

- ທຶນຊັ້ນໜຶ່ງ ປະກອບມີ ທຶນປະກອບຂອງຂາຮຸ້ນ, ຄັງແຮສຳຮອງຕາມລະບຽບການ, ຄັງແຮອື່ນໆ (ບໍ່ລວມເອົາການຕາດຄະເນຄືນໃໝ່), ຜົນໄດ້ຮັບລໍຖ້າຮັບຮອງ, ກຳໄລ (ຂາດທຶນ) ໃນການດຳເນີນງານຂອງປີການເງິນ.

$$3.\ \text{ອັດຕາສ່ວນໜີ້ທວງຍາກ} = \frac{\text{ສິນເຊື່ອທີ່ເປັນໜີ້ທວງຍາກ (>ສາມສິບວັນຂຶ້ນໄປ)}}{\text{ຍອດເຫຼືອສິນເຊື່ອທັງໝົດ}}$$

$$4.\ \text{ອັດຕາສ່ວນສິນເຊື່ອໃຫ້ແກ່ລູກຄ້າລາຍໃຫຍ່} = \frac{\text{ສິນເຊື່ອໃຫ້ແກ່ລູກຄ້າທັງໝົດທີ່ເກີນໜຶ່ງຮ້ອຍລ້ານກີບ}}{\text{ທຶນທັງໝົດ}}$$

$$5.\ \text{ອັດຕາສ່ວນສິນເຊື່ອໃຫ້ແກ່ລູກຄ້າໜຶ່ງລາຍ} = \frac{\text{ສິນເຊື່ອລູກຄ້າໜຶ່ງລາຍ}}{\text{ທຶນທັງໝົດ}}$$

$$6.\ \text{ສິນເຊື່ອໃຫ້ແກ່ພາກສ່ວນທີ່ມີສາຍພົວພັນທັງໝົດ} = \frac{\text{ສິນເຊື່ອໃຫ້ແກ່ພາກສ່ວນທີ່ມີສາຍພົວພັນທັງໝົດ}}{\text{ທຶນທັງໝົດ}}$$

$$7.\ \text{ສິນເຊື່ອໃຫ້ແກ່ພາກສ່ວນທີ່ມີສາຍພົວພັນໜຶ່ງລາຍ} = \frac{\text{ສິນເຊື່ອໃຫ້ແກ່ພາກສ່ວນທີ່ມີສາຍພົວພັນແຕ່ລະລາຍ}}{\text{ທຶນທັງໝົດ}}$$

8. อัดตาส่วนความพຽງພໍຂອງເງິນແຮສິນເຊື່ອທີ່ຖືກຈັດຊັ້ນ = $\dfrac{\text{ຈຳນວນເງິນແຮສ້າງຕົວຈິງ}}{\text{ເງິນແຮທັງໝົດທີ່ຕ້ອງສ້າງຕາມລະບຽບ}}$

9. ອັດຕາສ່ວນສະພາບຄ່ອງ 1 = $\dfrac{\text{ເງິນສົດໃນຄັງ}}{\text{ເງິນຝາກຂອງລູກຄ້າທັງໝົດ}}$

10. ອັດຕາສ່ວນສະພາບຄ່ອງ 2 = $\dfrac{\text{ເງິນສົດໃນຄັງ ແລະ ທີ່ຖືວ່າຄືເງິນສົດ + ເງິນຝາກຢູ່ສະຖາບັນການເງິນອື່ນ}}{\text{ໜີ້ສິນທັງໝົດ}}$

11. ອັດຕາສ່ວນການລະດົມທຶນ = $\dfrac{\text{ເງິນຝາກທັງໝົດ}}{\text{ທຶນຊັ້ນໜຶ່ງ}}$

## ໝວດທີ 3
## ບົດບັນຍັດສຸດທ້າຍ

**ມາດຕາ 11 ການຈັດຕັ້ງປະຕິບັດ**

ມອບໃຫ້ກົມຄຸ້ມຄອງສະຖາບັນການເງິນ ແລະ ສາຂາທະນາຄານແຫ່ງ ສປປ ລາວ ຢູ່ທ້ອງຖິ່ນ ເປັນເຈົ້າການໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຕາມພາລະບົດບາດຂອງຕົນ ໃຫ້ໄດ້ຮັບຜົນດີ.

ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ ແລະ ສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ ມີໜ້າທີ່ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 12 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບຂໍ້ຕົກລົງສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ຜູ້ວ່າການທະນາຄານແຫ່ງ ສປປ ລາວ

ບຸນເຫຼືອ ສິນໄຊວໍຣະວົງ